ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ.ລາວ

ເລກທີ 01 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28/01/2010

# ລະບຽບ
# ກ່ຽວກັບການນຳໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 275/ນຍ, ລົງວັນທີ 25 ກັນຍາ 2009;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ 172/ກຄທສ, ລົງວັນທີ 02 ພະຈິກ 2009.

## ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກລະບຽບ:

**ມາດຕາ 1. ຈຸດປະສົງ**

ລະບຽບສະບັບນີ້ ກຳນົດລະບຽບຫຼັກການ ກ່ຽວກັບການນຳໃຊ້ທຶນຈົດທະບຽນຂອງທະນາຄານທຸລະກິດ ແລະ ເງິນລົງທຶນຂອງສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ມີປະສິດທິຜົນ, ຮັບປະກັນໃຫ້ທະນາຄານມີຄວາມເຕີບໃຫຍ່, ເຂັ້ມແຂງ ແລະ ໝັ້ນຄົງ.

**ມາດຕາ 2. ອະທິບາຍຄຳສັບ**

1. **"ທຶນຈົດທະບຽນ"** ໝາຍເຖິງ ມູນຄ່າຂອງຮຸ້ນທັງໝົດທີ່ຜູ້ຖືຮຸ້ນໄດ້ປະກອບ ເພື່ອສ້າງຕັ້ງທະນາຄານທຸລະກິດ ຊຶ່ງລວມເປັນເງິນ ແລະ ວັດຖຸ, ໃນນັ້ນ ທຶນທີ່ເປັນວັດຖຸບໍ່ໃຫ້ເກີນ 10% ຂອງທຶນຈົດທະບຽນທັງໝົດ;
2. **"ເງິນລົງທຶນ"** ໝາຍເຖິງ ເງິນທຶນຂອງທະນາຄານທຸລະກິດຕ່າງປະເທດ ລົງທຶນເພື່ອສ້າງຕັ້ງສາຂາຂອງຕົນ ຢູ່ ສປປ ລາວ ຊຶ່ງລວມມີທັງເງິນ ແລະ ວັດຖຸ, ໃນນັ້ນ ທຶນເປັນວັດຖຸບໍ່ໃຫ້ເກີນ 10% ຂອງເງິນລົງທຶນທັງໝົດ.

**ມາດຕາ 3. ການຖອກທຶນຈົດທະບຽນ ແລະ ເງິນລົງທຶນ**

ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງຖອກທຶນຈົດທະບຽນ ຫຼື ເງິນລົງທຶນ ເຂົ້າບັນຊີເງິນຝາກຂອງຕົນທີ່ເປີດໄວ້ຢູ່ທະນາຄານ ແຫ່ງ ສປປ ລາວ ຢ່າງຄົບຖ້ວນ. ສໍາລັບທຶນເປັນວັດຖຸຕ້ອງແຈ້ງໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບ ເພື່ອກວດກາຕີລາຄາມູນຄ່າຕາມລະບຽບການ.

**ມາດຕາ 4. ການນໍາໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນ**

1. ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດສາມາດນໍາໃຊ້ທຶນຈົດທະບຽນ ຫຼື ເງິນລົງທຶນຂອງຕົນເຂົ້າໃນການກໍ່ສ້າງສໍານັກງານ, ປະກອບວັດຖຸເຕັກນິກ ແລະ ການເຄື່ອນໄຫວທຸລະກິດຂອງຕົນ ຕາມການອະນຸຍາດຂອງທະນາຄານ ແຫ່ງ ສປປ ລາວ. ການນໍາໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນເຂົ້າໃນການກໍ່ສ້າງພື້ນຖານ ແລະ ປະກອບວັດຖຸເຕັກນິກ ບໍ່ໃຫ້ເກີນ 35% ຂອງທຶນຈົດທະບຽນ ຫຼື ເງິນລົງທຶນທັງໝົດ ຊຶ່ງໃນນັ້ນລວມທັງ 10% ຂອງທຶນທີ່ເປັນວັດຖຸ, ສ່ວນທີ່ເຫຼືອແມ່ນນໍາໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ ໂດຍສະເພາະໂຄງການທີ່ມີປະສິດທິຜົນຕາມການອະນຸຍາດຂອງທະນາຄານ ແຫ່ງ ສປປ ລາວ.
2. ເງິນຄໍ້າປະກັນ 25% ຂອງທຶນຈົດທະບຽນ ແລະ ເງິນລົງທຶນ ທີ່ທະນາຄານ ແຫ່ງ ສປປ ລາວ ໄດ້ຮັກສາໄວ້ໃນເມື່ອກ່ອນ, ທະນາຄານ ແຫ່ງ ສປປ ລາວ ອະນຸຍາດໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ນໍາໃຊ້ເຂົ້າໃນການກໍ່ສ້າງສ້ອມແປງອາຄານ, ສໍານັກງານຂອງຕົນໃຫ້ແທນັນໜາຖາວອນ, ທັນສະໄໝ ແລະ ຮັບປະກັນຄວາມປອດໄພ.

   ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ມີອາຄານ, ສໍານັກງານແໜ້ນໜາຖາວອນເປັນຂອງຕົນເອງແລ້ວ, ທະນາຄານ ແຫ່ງ ສປປ ລາວ ຈະສົ່ງເງິນຄໍ້າປະກັນຄືນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດຕາມການອະນຸຍາດຂອງ ທະນາຄານ ແຫ່ງ ສປປ ລາວ.
3. ທຶນຈົດທະບຽນຂອງທະນາຄານທຸລະກິດ ແລະ ເງິນລົງທຶນຂອງສາຂາທະນາຄານທຸລະກິດຕ່າງປະເທດ ໄດ້ຖອກເປັນສະກຸນເງິນຕາຕ່າງປະເທດໃນເມື່ອກ່ອນໃຫ້ປ່ຽນເປັນສະກຸນເງິນກີບທັງໝົດນັບແຕ່ວັນທີ 1 ເດືອນກຸມພາ 2010 ເປັນຕົ້ນໄປ, ໂດຍຖືເອົາຕາມອັດຕາແລກປ່ຽນປິດບັນຊີເດືອນມັງກອນ 2010 ທີ່ກົມບັນຊີການເງິນແຈ້ງໃຫ້ທະນາຄານ ທຸລະກິດຈັດຕັ້ງປະຕິບັດເປັນອັດຕາຄິດໄລ່.

**ມາດຕາ 5. ການລາຍງານ ແລະ ຮັກສາເອກະສານ.**

ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງເກັບຮັກສາເອກະສານຢັ້ງຢືນກ່ຽວກັບການນຳໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນໄວ້ຢ່າງຄົບຖ້ວນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການກວດກາຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 6. ມາດຕະການຕໍ່ຜູ້ລະເມີດ.**

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຫາກລະເມີດລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການຕາມລະບຽບການ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ.

**ມາດຕາ 7. ການຈັດຕັ້ງປະຕິບັດ.**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ບັນດາກົມກ່ຽວຂ້ອງຂອງທະນາຄານ ແຫ່ງ ສປປລາວ, ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດທີ່ຕັ້ງ ຢູ່ ສປປ ລາວ ມີໜ້າທີ່ປະຕິບັດລະບຽບສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8. ຜົນສັກສິດ**

ລະບຽບສະບັບນີ້ ໃຊ້ປ່ຽນແທນຂໍ້ກຳນົດກ່ຽວກັບການນຳໃຊ້ທຶນຈົດທະບຽນ ສະບັບເລກທີ 129/ທຫລ, ລົງວັນທີ 16 ພຶດສະພາ 2001.

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

ພູເພັດ ຄຳພູນວົງ